Australian Government

COVID-19 VACCINATION

# ການຕຽມຕົວເພື່ອສັກຢາວັກຊີນຕ້ານ COVID-19

ອັບເດດຄັ້ງລ່າສຸດ: 30 ກໍລະກົດ 2021

## ໃຫ້ໝັ້ນໃຈວ່າຂໍ້ມູນສ່ວນຕົວຂອງທ່ານຖືກຕ້ອງ

ໃນຂະນະທີ່ທ່ານກຳລັງລໍຖ້າເວລານັດໝາຍຂອງທ່ານ, ມີບາງຢ່າງທີ່ທ່ານສາມາດເຮັດໄດ້ແຕ່ດຽວນີ້ເພື່ອຕຽມຕົວໄວ້.

ໃຫ້ໝັ້ນໃຈວ່າ ລາຍລະອຽດຂອງທ່ານຖືກຕ້ອງກັບເມດີແຄຣ໌, ຖ້າທ່ານມີສິດໄດ້ຮັບບັດນີ້ (ໃຫ້ສັງເກດວ່າທ່ານອາດຈະຍັງສາມາດໄດ້ສັກຢາວັກຊີນຕ້ານ COVID-19 ເຖິງວ່າທ່ານຈະບໍ່ມີສິດໄດ້ຮັບບັດເມດີແຄຣ໌). ທ່ານສາມາດເຮັດໄດ້ໂດຍຜ່ານການ:

- ບັນຊີເມດີແຄຣ໌ທາງອອນລາຍ ໂດຍຜ່ານ myGov
- ແອັບ ສາຍດ່ວນເພີ່ມຂອງເມດີແຄຣ໌ (Express Plus Medicare).
- ໂທລະສັບຫາ ໂຄງການເມດີແຄຣ໌.

ຖ້າທ່ານຍັງບໍ່ທັນໄດ້ເປີດບັນຊີ, ທ່ານສາມາດ:

- ລົງທະບຽນກັບເມດີແຄຣ໌, ຖ້າທ່ານຍັງບໍ່ທັນໄດ້ລົງທະບຽນເທື່ອ.
- ເປີດ ບັນຊີເມດີແຄທາງອອນລາຍ, ຖ້າທ່ານໄດ້ລົງທະບຽນກັບເມດີແຄຣ໌ແລ້ວ, ແຕ່ຍັງບໍ່ທັນໄດ້ເຊື່ອມເມດີແຄຣ໌ຂອງທ່ານຕໍ່ໃສ່ myGov.
- ຂໍເອົາເລກສຸຂະພາບປະຈຳຕົວບຸກຄົນ (IHI), ຖ້າທ່ານບໍ່ມີສິດຂໍເມດີແຄຣ໌.

ເມື່ອທ່ານໄດ້ຮັບການສັກຢາແລ້ວ, ທ່ານກໍຈະໄດ້ໃບປະຫວັດການສັກຢາເພື່ອຢັ້ງຢືນສະພາວະການສັກຢາຂອງທ່ານ. ທ່ານສາມາດຊອກເບິ່ງຂໍ້ມູນ ຈະເອົາໃບປະຫວັດການສັກຢາໄດ້ຢ່າງໃດ ທີ່ເວັບໄຊ້ຂອງ Services Australia.

## ຕຽມຕົວສຳລັບການນັດໝາຍ

ຢາວັກຊີນຕ້ານ COVID-19 ຢູ່ພາຍໃນອອສເຕຣເລັຍແລະຢູ່ທົ່ວໂລກແມ່ນມີຈຳນວນຈຳກັດ. ອັນນີ້ໝາຍຄວາມວ່າ, ຜູ້ທີ່ມີຄວາມສ່ຽງສູງສຸດໃນການຕິດເຊື້ອ COVID-19 ທີ່ຮ້າຍແຮງ ແລະ/ຫຼື ໃນການສຳຜັດກັບເຊື້ອໄວຣັສນີ້ຈະໄດ້ຮັບການສັກຢາວັກຊີນກ່ອນ. ຄົນອື່ນຈະໄດ້ຮັບການສັກຢາໃນລະຍະເວລາຕໍ່ໆໄປ. ໃຫ້ຊອກຫາຂໍ້ມູນເບິ່ງວ່າແມ່ນໃຜຈະໄດ້ຮັບບູລິມະສິດໃນການສັກວັກຊີນໂດຍການເຂົ້າໄປເບິ່ງທີ່ www.health.gov.au/covid19-vaccines. ທ່ານສາມາດກວດເບິ່ງວ່າທ່ານສາມາດຈອງນັດໝາຍໄປສັກຢາຕ້ານ COVID-19 ໄດ້ແລ້ວບໍໂດຍການເຂົ້າໄປເບິ່ງທີ່: https://covid-vaccine.healthdirect.gov.au/.

ທ່ານຕ້ອງ **ບໍ່** ໄປຕາມການນັດໝາຍໄປສັກຢາວັກຊີນຕ້ານ COVID-19 ຖ້າວ່າທ່ານ:

- ບໍ່ສະບາຍໂດຍມີອາການໄຂ້, ໄອ, ຂີ້ມູກຍ້ອຍ ຫຼື ມີອາການຢ່າງອື່ນທີ່ອາດມາຈາກ COVID-19.
- ກຳລັງລໍຖ້າຜົນການກວດຫາ COVID-19.
- ໄດ້ຜົນກວດຫາ COVID-19 ວ່າເປັນຜົນບວກແລະທ່ານກຳລັງແຍກປ່ຽວຢູ່.
- ກຳລັງຢູ່ໃນລະຫວ່າງກັກໂຕ.
- ຢູ່ໃກ້ຊິດກັບໃຜຜູ້ໜຶ່ງທີ່ມີເຊື້ອ COVID-19.

ຖ້າທ່ານຕົກຢູ່ໃນກໍລະນີໃດໜຶ່ງດັ່ງຂ້າງເທິງ, ໃຫ້ສອບຖາມກັບແພດທີ່ຈະສັກຢາໃຫ້ທ່ານເບິ່ງກ່ອນ. ທ່ານອາດຈະຕ້ອງໄດ້ເຮັດນັດສັກຢາໃໝ່. ຢາວັກຊີນ COVID-19 ບໍ່ເປັນຜົນໃນການນໍາມາປິ່ນປົວພະຍາດ COVID-19.

ຖ້າທ່ານໄດ້ສັກຢາກັນພະຍາດຢ່າງອື່ນພາຍໃນ 7 ວັນກ່ອນວັນນັດສັກຢາ COVID-19 ຂອງທ່ານ, ຈົ່ງແຈ້ງໃຫ້ແພດທີ່ໃຫ້ການສັກຢາຊາບ. ແພດທີ່ໃຫ້ການສັກຢາອາດຈະຂໍໃຫ້ທ່ານເຮັດມື້ນັດໝາຍໃໝ່.

ທ່ານບໍ່ຈໍາເປັນຕ້ອງກວດຫາ COVID-19 ກ່ອນສັກຢາວັກຊີນ ຖ້າວ່າທ່ານບໍ່ມີອາການໄຂ້ຫຼືມີອາການໃດໆກ່ຽວກັບລະບົບທາງເດີນຫາຍໃຈ.

## ໃຫ້ວາງແຜນໄວ້ລ່ວງໜ້າສໍາລັບຢາສອງໂດສ

ເປັນສິ່ງສໍາຄັນທີ່ທ່ານຕ້ອງໄດ້ຮັບຢາວັກຊີນຕ້ານ COVID-19 ເປັນຈໍານວນສອງໂດສ. ຕ້ອງມີລະຍະຫ່າງກັນຢ່າງນ້ອຍ ສາມ ອາທິດລະຫວ່າງຢາສອງໂດສຖ້າທ່ານສັກຢາວັກຊີນຕ້ານ COVID-19 Pfizer [Comirnaty]; ຈະມີລະຍະຫ່າງກັນ 12 ອາທິດລະຫວ່າງສອງໂດສຖ້າທ່ານສັກຢາ AstraZeneca. ການຫຍໍ້ລະຍະຫ່າງຈາກ 12 ອາທິດ ເຂົ້າມາເປັນລະຍະທີ່ບໍ່ໃຫ້ຕໍ່າກວ່າ 4 ອາທິດ ລະຫວ່າງສອງໂດສອາດຈະເໝາະສົມໃນບາງສະພາບການ. ການປົກປ້ອງຢ່າງດີສຸດຈາກ COVID-19 ຈະບໍ່ເກີດຂຶ້ນຈົນກວ່າຈະຮອດປະມານໜຶ່ງຫາສອງອາທິດຫຼັງຈາກການສັກຢາໂດສທີສອງ.

## ຈະເກີດຫຍັງຂຶ້ນທີ່ບ່ອນນັດໝາຍສັກຢາ

ທ່ານຕ້ອງເອົາສິ່ງຕ່າງໆດັ່ງຂ້າງລຸ່ມນີ້ໄປນໍາ ເມື່ອທ່ານມາບ່ອນນັດໝາຍສັກຢາຕ້ານ COVID-19:

- ບັດທີ່ມີຮູບຖ່າຍຕິດ, ຖ້າທ່ານມີ
- ບັດເມດີແຄຣ໌, ຖ້າທ່ານມີ
- ບັດພະນັກງານ, ຖ້າທານມາສັກຢາວັກຊີນຕ້ານ COVID-19 ຍ້ອນອາຊີບຂອງທ່ານ.
- ຂໍ້ມູນກ່ຽວກັບສະພາວະດ້ານສຸຂະພາບຂອງທ່ານ, ອາການພູມແພ້, ເລືອດໄຫຼອອກຜິດປົກກະຕິ, ຫຼື ຂໍ້ມູນກ່ຽວກັບການມີລະບົບພູມຕ້ານທານທີ່ປົກພ່ອງ (ໝາຍເຖິງ ລະບົບພູມຕ້ານທານອ່ອນແອ)
- ຂໍ້ມູນກ່ຽວກັບຢາຕ່າງໆທີ່ທ່ານກິນຢູ່
- ຂໍ້ມູນກ່ຽວກັບການສັກຢາວັກຊີນຕ້ານ COVID-19 ທີ່ເຄີຍໄດ້ຮັບມາກ່ອນ (ຍີ່ຫໍ້ຂອງຢາວັກຊີນແລະວັນທີ່ທີ່ໄດ້ຮັບການສັກຢາ)
- ຂໍ້ມູນກ່ຽວກັບປະຕິກິລິຍາໃດໆທີ່ທ່ານມີຕໍ່ການສັກຢາວັກຊີນຢ່າງໃດຢ່າງໜຶ່ງທີ່ຜ່ານມາ
- ຊື່ຂອງທ່ານໝໍ GP/s ແລະ ແພດຊ່ຽວຊານໃດໆທີ່ທ່ານພົບຢູ່
- ໜ້າກາກ (ຖ້າເປັນຄໍາສັ່ງຈາກລັດ/ເຂດປົກຄອງຂອງທ່ານ).

ຢູ່ບ່ອນນັດໝາຍ, ທ່ານຈະສາມາດປຶກສາຂໍ້ຂ້ອງໃຈໃດໆທີ່ທ່ານມີກ່ຽວການສັກຢາຕ້ານ COVID-19 ກັບແພດທີ່ໃຫ້ການສັກຢາຂອງທ່ານ.

ໃຫ້ບອກແພດທີ່ໃຫ້ການສັກຢາຖ້າວ່າທ່ານມີອາຍຸຕໍ່າກວ່າ60ປີ,ຖ້າທ່ານມີພາວະທາງສຸຂະພາບໃດໆ ຫຼື ຖ້າທ່ານກໍາລັງກິນຢາຢູ່. ໂດຍສະເພາະໃຫ້ໝັ້ນໃຈວ່າທ່ານຕ້ອງບອກເຂົາເຈົ້າຖ້າທ່ານ:

- ມີປະຕິກິລິຍາແພ້ຕໍ່ການສັກຢາໂດສກ່ອນຂອງຢາວັກຊີນຕ້ານ COVID-19 ຫຼື ສ່ວນປະກອບໃດໜຶ່ງຂອງຢາວັກຊີນ
- ມີອາການພູມແພ້ຢ່າງຮ້າຍແຮງ (ປະຕິກິລິຍາແພ້ຮ້າຍແຮງ) ຕໍ່ຢາວັກຊີນຊະນິດອື່ນຫຼືຢາຊະນິດອື່ນໆ
- ມີອາການສົ່ນຢ່າງຮ້າຍແຮງທີ່ແພດຊ່ຽວຊານເຫັນວ່າແມ່ນເກີດຂຶ້ນເມື່ອໄດ້ຮັບການສັກຢາວັກຊີນຕ້ານ COVID-19 ໂດສກ່ອນ
- ມີປະຫວັດການເປັນພະຍາດພູມແພ້ທີ່ເອີ້ນວ່າ mastocytosis ທີ່ພາໃຫ້ເກີດອາການພູມແພ້ຢ່າງຮຸນແຮງຊໍ້າກັນ ແລະ ຕ້ອງໄດ້ຮັບການປິ່ນປົວ
- ເຄີຍຖືກບົ່ງມະຕິຈາກແພດມາກ່ອນວ່າເປັນ ກຸ່ມອາການພະຍາດເສັ້ນເລືອດຝອຍຮົ່ວ (ca[illary leak syndrome)
- ເຄີຍມີການອຸດຕັນຂອງເສັ້ນເລືອດດໍາ ແລະ/ຫຼື ເສັ້ນເລືອດແດງໃຫຍ່ ສົມທົບກັບພາວະເມັດເລືອດນ້ອຍຕໍ່າ, ລວມເຖິງໄດ້ຖືກບົ່ງມະຕິວ່າມີພາວະຂອງກຸ່ມອາການຂອງກ້ອນເລືອດອຸດຕັນດ້ວຍກຸ່ມອາການຂອງເມັດເລືອດນ້ອຍຕໍ່າ (TTS), ຫຼັງຈາກການສັກຢາຕ້ານ COVID-19 ໂດສກ່ອນ
- ມີປະຫວັດຂອງພາວະເມັດເລືອດນ້ອຍຕໍ່າຍ້ອນຢາ heparin (HIT), ພາວະຫຼອດເລືອດໃນສະໝອງອຸດຕັນ (CVST), ພາວະກ້ອນເລືອດອຸດຕັນຢູ່ເສັ້ນເລືອດດໍາໃນຜົ້ງທ້ອງ (splanchnic veins) ຫຼື ກຸ່ມອາການຕ້ານທາດຟອສຟໍລີປິດທີ່ສໍາພັນກັນກັບການພາໃຫ້ເກີດກ້ອນເລືອດ.
- ເຄີຍມີ ການອັກເສບຂອງກ້າມເນື້ອຫົວໃຈ ແລະ/ຫຼື ຖົງຫຸ້ມຫົວໃຈອັກເສບ

- ກຳລັງເປັນໄຂ້ຮູມາຕິກແບບກະທັນຫັນຫຼືເປັນເມື່ອໝໍ່ໆນີ້ ຫຼື ເປັນພະຍາດເຫຍື່ອຫຸ້ມຫົວໃຈອັກເສບ (endocarditis)
- ເປັນພະຍາດຫົວໃຈມາແຕ່ເກີດ
- ເປັນພະຍາດຫ້ອງຫົວໃຈໃຫຍ່ (ສຳລັບຜູ້ທີ່ມາອາຍຸຕ່ຳກວ່າ 30 ປີ)
- ເຄີຍມີອາການຫົວໃຈລົ້ມເຫຼວຢ່າງຮຸນແຮງ
- ເປັນຜູ້ທີ່ໄດ້ຮັບການຜ່າຕັດປ່ຽນໝາກຫົວໃຈ
- ມີອາການເລືອດໄຫຼອອກຜິດປົກກະຕິຫຼືກຳລັງໄດ້ຮັບການປິ່ນປົວໂດຍໃຊ້ຢາຕ້ານເລືອດກ້າມ (ຢາເຮັດໃຫ້ເລືອດໃສ)
- ກຳລັງຖືພາ
- ມີລະບົບພູມຕ້ານທານບົກພ່ອງ (ເຊັ່ນມີລະບົບພູມຕ້ານທານທີ່ອ່ອນແອຫຼືກິນຢາທີ່ໄປກົດພູມຕ້ານທານ)
- ຜ່ານມາເຄີຍມີ COVID-19, ຫຼືກຳລັງມີອາການເຈັບປ່ວຍຈາກ COVID-19
- ເຄີຍໄດ້ຮັບການສັກຢາວັກຊີນຕ້ານ COVID-19 ມາກ່ອນ (ແລະໃຫ້ບອກວ່າຢາຊະນິດໃດ)
- ໄດ້ຮັບການສັກຢາວັກຊີນໃນລະຫວ່າງ 7 ມື້ຜ່ານມາ

ໃນບາງກໍລະນີ, ອາດຈະເປັນການດີຂຶ້ນທີ່ຈະຕ້ອງປຶກສາກັບແພດດູແລສຸຂະພາບຂອງທ່ານກ່ຽວກັບຢາວັກຊີນກ່ອນເຮັດນັດໝາຍໄປສັກຢາ. ນອກນີ້ ທ່ານກໍສາມາດອ່ານຂໍ້ມູນກ່ຽວກັບຢາວັກຊີນຊະນິດໃດໜຶ່ງທີ່ທານກຳລັງໄດ້ຮັບທີ່:

- Information on COVID-19 Pfizer (Comirnaty) vaccine, ຫຼື
- Information on COVID-19 Vaccine AstraZeneca

## ທ່ານຈະໄດ້ຮັບຢາວັກຊີນໂດຍວິທີໃດ

ທ່ານຈະໄດ້ຮັບຢາວັກຊີນໂດຍການສັກ, ສ່ວນໃຫຍ່ແມ່ນສັກເຂົ້າກ້າມເນື້ອກົກແຂນ. ທ່ານຕ້ອງຢູ່ໃນຄລີນິກສັກຢາວັກຊີນຢ່າງນ້ອຍ 15 ນາທີເພື່ອຕິດຕາມເບິ່ງອາການຫຼັງຈາກສັກຢາວັກຊີນແລ້ວ. ຂຶ້ນກັບປະຫວັດສຸຂະພາບຂອງທ່ານ, ບາງທີທ່ານອາດຈະຖືກຂໍໃຫ້ຖ້າຢູ່ໃນຄລີນິກເປັນເວລາ 30 ນາທີເພື່ອຕິດຕາມເບິ່ງອາການ.

## ຂໍ້ມູນທີ່ທ່ານໃຫ້ໃນມື້ນັດໝາຍຈະຖືກນຳໃຊ້ຢ່າງໃດ

ສຳລັບຂໍ້ມູນກ່ຽວກັບວ່າຂໍ້ມູນສ່ວນຕົວຂອງທ່ານຈະຖືກເກັບກຳ, ຮັກສາ ແລະ ນຳໃຊ້ຢ່າງໃດນັ້ນ ຂໍໃຫ້ເຂົ້າໄປເບິ່ງ https://www.health.gov.au/using-our-websites/privacy/privacy-notice-for-covid-19-vaccinations